ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ເລກທີ: 0449 /ກຜທ.ຫຂສພ.05

ນະຄອນຫຼວງວຽງຈັນ, ວັນທີ: 27...ເມສາ...2021

# ແຈ້ງການ

**ເຖິງ:** ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການດຳເນີນກິດຈະການຂອງບັນດາໂຮງງານ, ບໍລິສັດ, ຫ້າງຮ້ານ ໃນ ຂສພ ໃນໄລຍະການສືບຕໍ່ ປະຕິບັດມາດຕະການໃນການປ້ອງກັນ, ຄວບຄຸມ ແລະ ສະກັດກັ້ນ ການລະບາດຂອງພະຍາດ COVID-19 ໃນໄລຍະແຕ່ ວັນທີ 26 ເມສາ - ວັນທີ 05 ພຶດສະພາ 2021.

- ອີງຕາມ ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມ ແຈ້ງການ ຫສນຍ ສະບັບເລກທີ 406/ຫສນຍ, ລົງວັນທີ 26 ເມສາ 2021;
- ອີງຕາມ ແຈ້ງການກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0323/ອຄ.ກອຫ, ວັນທີ 26 ເມສາ 2021.

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ (ຫຂສພ) ຂໍແຈ້ງມາຍັງບັນດາທ່ານ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ຊາບວ່າ ໂຮງງານຕັດຫຍິບ ແລະ ໂຮງງານຜະລິດເກີບ ທີ່ຕັ້ງຢູ່ພາຍໃນ ຂສພ ແມ່ນໃຫ້ຈັດຕັ້ງປະຕິບັດແຈ້ງການເລກທີ 0323/ອຄ.ກອຫ, ສະບັບລົງວັນທີ 27 ເມສາ 2021. ສຳລັບກິດຈະການອື່ນໆທີ່ເຄື່ອນໄຫວຢູ່ໃນ ຂສພ ແມ່ນສາມາດສືບຕໍ່ ໂດຍຈັດຕັ້ງປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ເພື່ອຫຼຸດຜ່ອນຄວາມສ່ຽງຈາກການລະບາດ ຂອງພະຍາດໂຄວິດ 19 ຢ່າງເຄັ່ງຄັດ ຕາມຄຳສັ່ງເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ແລະ ແຈ້ງການ 0440/ຫຂສພ.05, ລົງວັນທີ 24 ເມສາ 2021 ໄປກ່ອນ ຈົນກວ່າຈະມີຄຳສັ່ງເພີ່ມເຕີມ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຮ ຫົວໜ້າຫ້ອງການ

ສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ຂັນຕີ ໄລກອາພອນ

ເອກະສານຄັດຕິດ:

1. ແຈ້ງການ 0323/ອຄ.ກອຫ 01 ສະບັບ;
2. ແຈ້ງການ 0440/ຫຂສພ.05 01 ສະບັບ.

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ
ຄະນະສະເພາະກິດເພື່ອປ້ອງກັນ, ຄວບຄຸມ ແລະ
ແກ້ໄຂການລະບາດຂອງພະຍາດໂຄວິດ 19

ເລກທີ 0323 /ອຄ.ກອທ
ນະຄອນຫຼວງວຽງຈັນ, ວັນທີ 26 ເມສາ 2021

# ແຈ້ງການ

ເຖິງ : - ຫົວໜ້າພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.
- ປະທານສະມາຄົມອຸດສາຫະກຳຕັດຫຍິບ ແຫ່ງຊາດລາວ
- ຜູ້ອຳນວຍການໂຮງງານຕັດຫຍິບ ແລະ ໂຮງງານຜະລິດເກີບ ໃນຂອບເຂດທົ່ວປະເທດ.

ເລື່ອງ: ປຸດເຊົາຊົ່ວຄາວການດຳເນີນກິດຈະການໂຮງງານຕັດຫຍິບ ແລະ ໂຮງງານຜະລິດເກີບ ເພື່ອສະກັດກັ້ນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ 19.

- ອີງຕາມຄຳສັ່ງນາຍົກລັດຖະມົນຕີວ່າດ້ວຍການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021.
- ອີງຕາມແຈ້ງການເພີ່ມທະວີມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານ ເພື່ອຕ້ານພະຍາດໂຄວິດ 19 ໃນໂຮງງານອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ ເລກທີ 0310/ອຄ.ກອທ, ລົງວັນທີ 23 ເມສາ 2021.
- ອີງຕາມທິດຊີ້ນຳຂອງຄະນະນຳກະຊວງອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ.................................

ລັດຖະມົນຕີ ກະຊວງອຸດສາຫະກຳ ແລະ ການຄ້າ ອອກແຈ້ງການ:

1. ໃຫ້ໂຮງງານຕັດຫຍິບ ແລະ ໂຮງງານຜະລິດກິບ ປຸດເຊົາຊົ່ວຄາວການດຳເນີນກິດຈະການໂຮງງານຈົນຮອດວັນທີ 5 ພຶດສະພາ 2021 ເພື່ອສະກັດກັ້ນ ແລະ ຄວບຄຸມການລະບາດຂອງພະຍາດໂຄວິດ 19. ຍົກເວັ້ນໂຮງງານທີ່ນຳໃຊ້ສະເພາະກຳມະກອນ ຢູ່ຫໍພັກໃນຂອບເຂດໂຮງງານ;
2. ໃຫ້ໂຮງງານທີ່ສືບຕໍ່ດຳເນີນກິດຈະການໂຮງງານ ຫຼື ປຸດເຊົາຊົ່ວຄາວ ສືບຕໍ່ປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ແລະ ແກ້ໄຂການແຜ່ລະບາດຂອງພະຍາດໂຄວິດ 19 ຢ່າງເຂັ້ມງວດ.
3. ແຈ້ງການສະບັບນີ້ ມີຜົນສັກສິດນັບແຕ່ ວັນທີ 27 ເມສາ 2021 ເປັນຕົ້ນໄປ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານ ເພື່ອຈັດຕັ້ງປະຕິບັດ ຢ່າງເຂັ້ມງວດດ້ວຍ.

ຮອງລັດຖະມົນຕີ
ຫົວໜ້າຄະນະສະເພາະກິດ

ສ. ພົມ

ສົມຈິດ ອິນທະມິດ

Scanned with CamScanner

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຜນການ ແລະ ການລົງທຶນ

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ເລກທີ: 0440 /ຫຂສພ.05

ນະຄອນຫຼວງວຽງຈັນ, ວັນທີ: 24 ເມສາ 2021

# ແຈ້ງການ

ເຖິງ: ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

ເລື່ອງ: ການຄຸ້ມຄອງພະນັກງານ ແລະ ແຮງງານທີ່ເຮັດວຽກໃນ ເຂດເສດຖະກິດພິເສດ ໃນໄລຍະປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ເພື່ອລຸດຜ່ອນຄວາມສ່ຽງ ຈາກການລະບາດ ຂອງພະຍາດໂຄວິດ 19 ຕາມຄໍາສັ່ງເລກທີ 15/ນຍ ຢູ່ບັນດາ ຂສພ ທົ່ວປະເທດ.

- ອີງຕາມດໍາລັດວ່າດ້ວຍເຂດເສດຖະກິດພິເສດ ສະບັບເລກທີ 188/ລບ, ລົງວັນທີ 7 ມິຖຸນາ 2018;
- ອີງຕາມຄໍາສັ່ງວ່າດ້ວຍການເພີ່ມທະວີ ມາດຕະການສະກັດກັ້ນ, ຄວບຄຸມ ແລະ ກຽມຄວາມພ້ອມຮອບດ້ານເພື່ອຕ້ານພະຍາດໂຄວິດ 19 (COVID-19) ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021;
- ອີງຕາມທິດຊີ້ນໍາຂອງທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ຄັ້ງວັນທີ 24 ເມສາ 2021.

ຫ້ອງການສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ (ຫຂສພ) ຂໍແຈ້ງມາຍັງບັນດາທ່ານ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ກ່ຽວກັບການຄຸ້ມຄອງພະນັກງານ ແລະ ແຮງງານທີ່ເຮັດວຽກໃນເຂດເສດຖະກິດພິເສດ ໃນໄລຍະປະຕິບັດມາດຕະການສະກັດກັ້ນ, ຄວບຄຸມ ເພື່ອລຸດຜ່ອນຄວາມສ່ຽງຈາກການລະບາດ ຂອງພະຍາດໂຄວິດ 19 ຕາມຄໍາສັ່ງເລກທີ 15/ນຍ ແຕ່ວັນທີ 22 ເມສາ - 5 ພຶດສະພາ 2021 ດັ່ງນີ້:

1. ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ/ ນະຄອນຫຼວງວຽງຈັນ ເຜີຍແຜ່ ແລະ ຕິດຕາມການຈັດຕັ້ງປະຕິບັດຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ, ສະບັບເລກທີ 15/ນຍ, ລົງວັນທີ 21 ເມສາ 2021 ໃຫ້ຜູ້ພັດທະນາ, ຜູ້ລົງທຶນ ກໍຄືບັນດາໂຮງຈັກໂຮງງານ, ບໍລິສັດ, ຫ້າງຮ້ານ ຢູ່ໃນເຂດເສດຖະກິດພິເສດ (ຂສພ) ທີ່ດໍາເນີນກິດຈະການ ເພື່ອຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດ ຄໍາສັ່ງເລກທີ 15/ນຍ ຢ່າງເຂັ້ມ ງວດ ເພື່ອສະກັດກັ້ນການລະບາດຂອງພະ ຍາດ COVID 19;
2. ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ/ ນະຄອນຫຼວງວຽງຈັນ ອອກບັດໃຫ້ພະນັກງານ, ກໍາມະກອນທີ່ພັກປ່ຽນກັນມາປະຈໍາການຢູ່ໃນ ຂສພ ຂອງຕົນ ເພື່ອເປັນເອກະສານຢັ້ງຢືນຕໍ່ເຈົ້າໜ້າທີ່ກວດກາຕາມເສັ້ນທາງຈາກບ່ອນພັກເຊົາມາສະຖານທີ່ເຮັດວຽກ ໃນ ຂສພ;
3. ໃຫ້ຄະນະຄຸ້ມຄອງເຂດເສດຖະກິດພິເສດແຂວງ/ ນະຄອນຫຼວງວຽງຈັນ, ຜູ້ພັດທະນາ, ຜູ້ລົງທຶນ ກໍຄືບັນດາໂຮງຈັກໂຮງງານ, ບໍລິສັດ, ຫ້າງຮ້ານ ຢູ່ໃນເຂດເສດຖະກິດພິເສດ (ຂສພ) ສືບຕໍ່ຈັດຕັ້ງປະຕິບັດບັນດາມາດຕະການ ເພື່ອປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດໂຄວິດ 19 ເຊັ່ນ:
    1) ໃຫ້ມີມາດຕະການຈັດແບ່ງພະນັກງານ, ກໍາມະກອນຂອງຕົນພັດປ່ຽນກັນມາປະຈໍາການເພື່ອຮັກສາໄລຍະຫ່າງຕາມການແນະນໍາຂອງຂະແໜງສາທາລະນະສຸກ;
    2) ວັດແທກອຸນນະພູມພະນັກງານ, ກໍາມະກອນ ເຊົ້າ ແລະ ແລງ, ສະໜອງເຈລ ລ້າງມື, ຜ້າອັດປາກ-ດັງ, ນໍ້າສະອາດ, ສີດຢາຂ້າເຊື້ອຢູ່ຫ້ອງການ, ໂຮງງານບ່ອນຜະລິດເປັນປົກກະຕິ.

Scanned with CamScanner

3) ມີການອຳນວຍຄວາມສະດວກໃຫ້ແກ່ທີມແພດເຂົ້າໄປຕິດຕາມ, ກວດກາຫຼືເຜີຍແຜ່ຄວາມຮູ້ກ່ຽວກັບພະຍາດ COVID-19 ເປັນໄລຍະ.

4. ໃຫ້ບັນດາ ຄະນະຄຸ້ມຄອງເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ ລາຍງານສະພາບການຈັດຕັ້ງປະຕິບັດໃຫ້ຄະນະສະເພາະກິດ ແລະ ຄະນະນຳຂັ້ນເທິງບ່ອນເຂດຕັ້ງຢູ່ ພ້ອມທັງສົ່ງໃຫ້ ຫຂສພ ຮັບຊາບຢ່າງເປັນປົກກະຕິ (ປະຈຳອາທິດ ຫຼືປະຈຳວັນຕາມກໍລະນີຮີບດ່ວນ).

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດຢ່າງເຂັ້ມງວດ.

ຫົວໜ້າຫ້ອງການ
ສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ

ຈຳປາ ຄຳສຸກໃສ

Scanned with CamScanner